# ໜັງສືເຊີນເຂົ້າແຂ່ງຂັນປະມູນ

ໂຄງການ: ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

ແຫລ່ງທຶນ: IDA Grant No. H685LA and Additional Credit No. 5677-LA

ສັນຍາເລກທີ: PRF/Motorcycle.105/G-NCB/2016 (G015)

1. ລັດຖະບານ ສປປ ລາວ ໄດ້ຮັບທຶນຊ່ວຍເຫລືອລ້າ ຈາກສະມາຄົມພັດທະນາສາກົນ (IDA), ທະນາຄານໂລກ ສົມທົບກັບກອງທຶນສຳຮອງຈາກບັນດາຜູ້ໃຫ້ທຶນຕ່າງໆ ເພື່ອໃຊ້ຈ່າຍສຳລັບໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ ແລະ ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນການດຳເນີນການຈັດຊື້ລົດຈັກ ຈຳນວນ 105 ຄັນ.
2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນສຳລັບການຈັດຊື້ລົດຈັກ ຈຳນວນ 105 ຄັນ. ໄລຍະການສົ່ງມອບ ແມ່ນ 30 ວັນ. ສະຖານທີ່ສົ່ງມອບແມ່ນຫ້ອງການ ທລຍ ນະຄອນຫລວງ ວຽງຈັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນດຳລັດ ວ່າດ້ວຍການປະມູນຈັດຊື້ສິນຄ້າ, ກໍ່ສ້າງ ສ້ອມແປງ ແລະ ການບໍລິການ ດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9/01/2004, ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ ສະບັບເລກທີ 063/ກງ, ລົງວັນທີ 12/03/2004, ແລະ ສະບັບດັດແກ້ ເລກທີ 0861/ກງ, ລົງວັນທີ 5/05/2009
4. ບໍລິສັດທີ່ມີຄວາມເໝາະສົມ ສາມາດສອບຖາມຂໍ້ມູນເພີ້ມເຕີມ ແລະ ກວດກາເອກະສານປະມູນໄດ້ ໃນເວລາໂມງການແຕ່ເວລາ 0900 ຫາ 1700 ໂມງ, ຕາມທີ່ຢູ່ຂ້າງລຸ່ມ
5. ບໍລິສັດທີ່ມີຄວາມເໝາະສົມ ສາມາດພິວພັນຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໂດຍເຂົ້າມາພົວພັນດ້ວຍຕົນເອງຕາມທີ່ຢູ່ຂ້າງລຸ່ມນີ້ ແລະ ໂດຍຈ່າຍເງິນທີ່ຈະບໍ່ສົ່ງຄືນ ຈຳນວນ 100 ໂດລາສະຫະລັດ. ວິທີຊຳລະຕ້ອງຈ່າຍເປັນເງິນສົດ.
6. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ ໃນມື້ ຫລື ກ່ອນເວລາ 14:00 ຂອງວັນທີ 3/11/2016. ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ການປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ເຂົ້າປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ງກຳນົດໄວ້ຂ້າງລຸ່ມນີ້ ໃນວລາ 14:00, ວັນທີ 3/11/2016.
7. ທຸກໆເອກະສານຈະຕ້ອງມີໃບແຈ້ງການຮັບປະກັນການປະມູນ
8. ບ່ອນຢູ່ທີ່ກ່າວເຖິງຢູ່ຂ້າງເທິງແມ່ນ :

   ກອງທຶນຫລຸດຜ່ອນຄວາມທຸກຍາກ ຕັ້ງຢູ່ໃນຫ້ອງການສຳນັກງານນາຍົກລັດຖະມົນຕີ
   ອາຄານ 501, ຊັ້ນ 1, ບ້ານ ສີສະຫວາດ, ຖະໜົນ ນາໄຮ່ດຽວ,
   ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ
   ໂທ: 261479-80 ຕໍ່ 105 (ໜ່ວຍງານ: ຈັດຊື້-ຈັດຈ້າງ)
   www.prflaos.org